# ການປູກໄມ້ສັກ ຂະໜາດນ້ອຍ ຢູ່ແຂວງ ຫຼວງພະບາງ ເປັນທາງເລືອກໜຶ່ງ ໃຫ້ແກ່ການກະສິກຳ ແບບບປະສົມປະສານ



ສະພາບພູມສັນຖານໃນເຂດພູດອຍ, ມີພື້ນຖານໂຄງລ່າງ ທີ່ຍັງບໍ່ທັນໄດ້ມີການພັດທະນາເທົ່າທີ່ຄວນ, ຂໍ້ຈຳກັດທາງດ້ານຄວາມຕ້ອງການຂອງການຕະຫຼາດ ແລະ ການປັບຕົວທີ່ຊັກຊ້າຂອງຊາວກະສິກອນຕໍ່ກັບເຕັກໂນໂລຍີໃໝ່ ກໍ່ຍັງບໍ່ຢູ່ໃນທ່າກ້າວທີ່ວ່ອງໄວ, ແຕ່ແນວໃດກໍ່ຕາມ, ການປູກໄມ້ສັກ ໂດຍຊາວໄຮ່ ໄດ້ມີການຂະຫຍາຍຕົວຢ່າງໄວວາ ເລີ້ມຕົ້ນແຕ່ປີ 1998 ເປັນຕົ້ນມາ. ເຖິງແມ່ນວ່າຈະເປັນການສ້າງລາຍຮັບສູງ ແລະ ການມີຄວາມພ້ອມຂອງຊາວກະສິກອນ, ແຕ່ຜົນໄດ້ຮັບຈາກການປູກໄມ້ສັກກໍ່ ຍັງມີຂໍ້ຈຳກັດ ຄືດັ່ງນີ້:

- ການຈັດການ/ຄຸ້ມຄອງ ສວນປູກໄມ້ສັກ ຍັງເຮັດບໍ່ທັນໄດ້ດີ,
- ແນວພັນ ທີ່ໃຊ້ໃນການປູກໃນປະຈຸບັນ ຍັງບໍ່ຮັບປະກັນຄຸນນະພາບ,
- ຍັງມີຂໍ້ຂັດແຍ່ງ ກັບການຜະລິດກະສິກຳ ໃນການນຳໃຊ້ທີ່ດິນ,
- ຍັງບໍ່ທັນມີຄວາມສາມາດໃນການຮັກສາສວນປູກ ໄດ້ເຖິງ 20-30 ປີ,



ນອກຈາກນີ້, ຍັງມີຜົນກະທົບຈາກພະຍາດ ແລະ ບົ້ງແມງ, ດິນເຊາະເຈື່ອນຢ່າງຮ້າຍແຮງ ແລະ ດິນເຊື່ອມໂຊມ. ການປູກໄມ້ສັກ ສາມາດເປັນທາງເລືອກ ຫຼື ເປັນການຊົດເຊີຍ ໃນການຖາງປ່າເຮັດໄຮ່, ແຕ່ເບິ່ງລວມແລ້ວມັນບໍ່ໄດ້ມີບົດບາດ ໃນການປັບປຸງ ລະບົບປ່າເລົ່າແຕ່ຢ່າງໃດ.

## ປະຫວັດຄວາມເປັນມາ

ການປູກໄມ້ສັກ ໂດຍຊາວກະສິກອນ ໃນພາກເໜືອ ຂອງ ສປປ. ລາວ ໄດ້ເລີ່ມຕົ້ນມາແຕ່ປະມານປີ 1950 ໂດຍການສົ່ງເສີມຈາກສະໄໝລະບອບທິວເມືອງຂຶ້ນຂອງຝຣັ່ງເສດ. ຫຼັງຈາກນັ້ນ, ເລີ່ມແຕ່ຊ່ວງທ້າຍຂອງຊຸມປີ 1980, ຊາວກະສິກອນໄດ້ມີການຂະຫຍາຍພື້ນທີ່ສວນປູກໄມ້ສັກອອກຢ່າງກວ້າງຂວາງ. ແຂວງ ຫຼວງພະບາງ ແມ່ນເປັນ ແຂວງ ໃຈກາງໃນການຂະຫຍາຍສວນປູກໄມ້ສັກ ຍ້ອນວ່າ ມັນປະກອບມີພື້ນຖານໂຄງລ່າງທີ່ດີ ແລະ ສວນປູກເກົ່າ ໃນປະຈຸບັນກໍ່ສາມາດ ເກັບແກ່ນໄດ້ແລ້ວ.

ການປູກໄມ້ສັກ ແມ່ນເປັນທີ່ສົນໃຈຂອງຊາວໄຮ່ ແລະ ໄດ້ຂະຫຍາຍພື້ນທີ່ອອກໄປສູ່ເຂດພູດອຍ ຊຶ່ງໃນຜ່ານມາ ໄດ້ມີການປູກໄມ້ສັກ ພຽງເລັກໜ້ອຍເທົ່ານັ້ນ. ໃນນີ້ ໝາຍຄວາມວ່າ ຊົນເຜົ່າຕ່າງໆ ທີ່ບໍ່ແມ່ນຊົນເຜົ່າລາວ ກໍ່ໄດ້ມີຄວາມສົນໃຈໃນການປູກໄມ້ສັກ, ໂດຍສະເພາະ ແມ່ນ ຊົນເຜົ່າຂະມຸ.

ພາຍຫຼັງປະເທດລາວ ໄດ້ຮັບການປົດປ່ອຍໃນປີ 1975, ແຜນພັດທະນາເສດຖະກິດ ຂອງສູນກາງ ໄດ້ຖືເອົາກຳມະສິດຄຸ້ມຄອງທີ່ດິນ ເປັນຂອງລັດທັງໝົດ ແລະ ໄດ້ສະເໜີ ໃຫ້ເປັນສະຫະກອນລວມໝູ່. ໃນຊ່ວງໄລຍະຊຸມປີ ດັ່ງກ່າວ, ລັດຖະບານ ໄດ້ມີໂຄງການສົ່ງເສີມການປູກໄມ້ໃນທຸກໆແຂວງ, ຊຶ່ງສ່ວນໃຫຍ່ໄດ້ ຖືກຈັດຕັ້ງປະຕິບັດ ໂດຍລັດວິສາຫະກິດຂອງລັດ.

## ຄຸນລັກສະນະ ແລະ ການນຳໃຊ້ ໄມ້ສັກ

ໄມ້ສັກແມ່ນມີຄຸນລັກສະນະພິເສດຊຶ່ງເຮັດໃຫ້ມັນເປັນຊະນິດໄມ້ທີ່ມີຊື່ສຽງລອງຈາກບັນດາຊະນິດໄມ້ທີ່ມີລາຄາແພງ, ທັງຕະຫຼາດພາຍໃນ ແລະ ສາກົນ. ໂຄງສ້າງຂອງໄມ້ແມ່ນມີຄວາມແຂງແກ່ນ, ທົນທານ, ແລະ ມີຄວາມຕ້ານທານຕໍ່ຈຳພວກເຊື້ອລາ ແລະ ປວກ. ແຕ່ມັນຍັງມີຄວາມສ່ຽງ ໃນການແຕກງ່າຍ ແລະ ຄົດງໍ ໃນເວລາຕາກແຫ້ງ ແລະ ປຸງແຕ່ງເປັນຜະລິດຕະພັນ. ໄມ້ສັກແມ່ນງ່າຍໃນການຄວັດລວດລາຍຊຶ່ງມີຄວາມເໝາະສົມໃນການກໍ່ສ້າງເຮືອນ, ເຮັດເຮືອ, ແລະ ເຮັດເຄື່ອງເຟີນີເຈີ.



ໄມ້ສັກເປັນໄມ້ທີ່ມີລາຄາແພງສາມາດຂົນສົ່ງໄປໄລຍະ ທາງໄກໄດ້ຢ່າງມີເສດຖະກິດຊຶ່ງມີຄວາມແຕກຕ່າງກັບໄມ້ອຸດສາຫະກຳຊະນິດອື່ນໆເຊັ່ນ: ໄມ້ວິກ ແລະ ໄມ້ກະຖິນນະລົງຊຶ່ງເປັນຈຳພວກໄມ້ທີ່ຕ້ອງອີງໃສ່ແຕ່ໂຮງງານປຸງແຕ່ງທີ່ຢູ່ໃກ້ຄຽງ ເພື່ອນຳໄປເຮັດເຫຍື້ອໄມ້ ຫຼື ເຈັ້ຍ.

ໃນ ສປປ. ລາວ, ການນຳໃຊ້ໄມ້ສັກ ເພື່ອວັດຖຸປະສົງ ຢ່າງອື່ນ ແມ່ນມີໜ້ອຍ. ເຊັ່ນການຍ້ອມໄໝ ໃຫ້ເປັນສີເຫຼືອງງາມ ແມ່ນ ສາມາດເຮັດໄດ້ ໂດຍການຕົ້ມໃບໄມ້ສັກແຫ້ງ, ໄມ້ເສດເຫຼືອຈາກການຕັດສາງ ແລະ ການລິງ່າ ສາມາດນຳໄປເຮັດຟືນ, ແລະ ໃບໄມ້ສັກ ອາດສາມາດນຳໄປມຸງຫຼັງຄາ ແລະ ທີ່ສິ່ງຂອງຕ່າງໆໄດ້.

## ການຂະຫຍາຍພັນ

ໄມ້ສັກປົກກະຕິແລ້ວຈະປູກດ້ວຍເຫງົ້າ, ຊຶ່ງບໍ່ມີລາຄາແພງ, ສະດວກໃນການຂົນສົ່ງ ແລະ ການປູກ ແລະ ຕົ້ນໄມ້ຈະເລີນເຕີບໂຕໄວ, ແຕ່ມັນມີຄວາມໄຫວ ຕໍ່ກັບຄວາມແຫ້ງແລ້ງ ໃນຊ່ວງໄລຍະສອງເດືອນທຳອິດ ຫຼັງຈາກການປູກ. ເລີ້ມແຕ່ ປີ 1993, ໄດ້ມີຫຼາຍສວນກ້າ ເອກະຊົນຫຼາຍບ່ອນ ສາມາດ ຜະລິດເຫງົ້າເພື່ອປູກເອງ ແລະ ຂາຍ. ເບ້ຍໄມ້ສັກຈະມີລາຄາສູງກ່າວ, ຫຍຸ້ງຍາກໃນການຂົນສົ່ງ ແລະ ຕົ້ນໄມ້ກໍ່ບໍ່ຈະເລີນເຕີບໂຕໄວ.

ຈຸດດີໃນການປັບປຸງພັນໄມ້ສັກແມ່ນຈະເຮັດໃຫ້ມີການຈະເລີນເຕີບໂຕໄວ ແລະ ການຄັດເລືອກຕົ້ນໄມ້ທີ່ດີ ຈະເຮັດໃຫ້ບໍລິມາດໄມ້ເພີ້ມຂຶ້ນເຖິງ 10-15 % (Hedegart 1995). ໃນ ສປປ. ລາວ ການຄັດເລືອກຕົ້ນໄມ້ພໍ່ແມ່ພັນຢ່າງຖືກຕ້ອງຕາມລະບົບ ຫຼືຖິ່ນກຳເນີດ ແມ່ນເຮັດບໍ່ທັນໄດ້ດີ, ແລະ ສວນປູກໄມ້ສັກ ໃນຊ່ວງຊຸມປີຫຼັງໆນີ້ ແມ່ນບໍ່ສາມາດຮູ້ໄດ້ເຖິງສາຍພັນ ແລະ ແຫຼ່ງທີ່ມາຂອງແນວພັນເລີຍ.

ການຂະຫຍາຍສວນປູກໄມ້ຢ່າງໄວວາ ຢູ່ພາກເໜືອຂອງລາວ ໄດ້ສົ່ງຜົນສະທ້ອນ ເຮັດໃຫ້ມີການຂາດແຄນແກ່ນພັນ ແລະ ຂາດການຄັດເລືອກແນວພັນທີ່ດີ ເຂົ້າໃນການປູກໄມ້ສັກ. ໃນຫຼາຍໆປີຜ່ານມາ. ການຂາດເຂີນແກ່ນພັນ ໄດ້ສົ່ງຜົນເຮັດໃຫ້ລາຄາແກ່ນໄມ້ສັກ ທີ່ແຂວງຫຼວງພະບາງ ສູງຂຶ້ນ ຈາກ 35 ກີບ ເຖິງ 800 ກີບຕໍ່ກິໂລກຼາມ. ໃນ ລະຫວ່າງປີ 1992 ແລະ 1996. ເຖິງແມ່ນວ່າ ລາຄາໂດຍທົ່ວໄປ ຈະຖີບຕົວສູງຂຶ້ນ, ແຕ່ລາຄາເບ້ຍໄມ້ສັກ ແມ່ນປະມານ 5 ຫາ 10 ກີບຕໍ່ເບ້ຍ, ເທົ່າກັບ 10-20 ເປີເຊັນ ຂອງລາຄາຂອງເຫງົ້າໄມ້ສັກ.



## ລັກສະນະ ຂອງ ໄມ້ສັກ ໃນ ລາວ



| ເດືອນ | ລັກສະນະ |
|---|---|
| ທັນວາ-ມັງກອນ | ໃບລົ່ນ |
| ກຸມພາ | ບໍ່ມີໃບ |
| ມີນາ-ເມສາ | ເລີ້ມແຕກໃບອ່ອນ |
| ພຶດສະພາ | ມີໃບເຕັມຕົ້ນ |
| ມິຖຸນາ | ມີໃບເຕັມຕົ້ນ + ໃຫ້ດອກ |
| ກໍລະກົດ | ມີໃບເຕັມຕົ້ນ + ມີດອກ + ໃຫ້ໝາກ |
| ສິງຫາ-ຕຸລາ | ມີໃບເຕັມຕົ້ນ |
| ພະຈິກ | ເລີ້ມຕົ້ນລົ່ນໃບ |

## ການຄຸ້ມຄອງ

ໄມ້ສັກ ຈະປູກແບບປະສົມປະສານ ໄປກັບພືດກະສິກຳອື່ນໆ ໃນຊ່ວງໄລຍະ ປີທີ່ 1 ເຖິງປີ 3, ທັງນີ້ ແມ່ນເພື່ອຮັບປະກັນການເສຍຫຍ້າ ແລະ ການປົກປັກຮັກສາ ໃນຊ່ວງປີເລີ້ມຕົ້ນ ແລະ ເພື່ອໃຫ້ມີການຂະຫຍາຍຕົວດີ. ມີພຽງຄອບຄົວສ່ວນໜ້ອຍເທົ່ານັ້ນ ທີ່ມີແຮງງານພຽງພໍ ໃນການບົວລະບັດຮັກສາຄືດັ່ງກ່າວ ຖ້າຫາກວ່າ ການປູກໄມ້ສັກ ແລະ ການປູກພືດອື່ນໆ ຫາກແຍກກັນຢູ່ຄົນລະຕອນ

ເຫງົ້າໄມ້ສັກ ຈະປູກໃນເດືອນມິຖຸນາ (6) ຫຼື ກໍລະກົດ (7) ພາຍຫຼັງຈາກ ການເສຍຫຍ້າໄຮ່ໃນຄັ້ງທຳອິດ. ການປູກຫຼັງຈາກກາງເດືອນກໍລະກົດ ແມ່ນ ບໍ່ມີຄວາມເໝາະສົມ ເພາະວ່າ ຕົ້ນໄມ້ສັກນ້ອຍຈະມີຄວາມສ່ຽງ ໃນການມີຫຍ້າຂຶ້ນຫຼາຍ, ການທຳລາຍຈາກສັດ ແລະ ໄຟໄໝ້ລາມປ່າໃນຊ່ວງລະດູແລ້ງ. ໃນຊ່ວງສິ້ນສຸດການປູກພືດແບບປະສົມປະສານ ໃນ ປີທີ່ 1 ຫາ 3 ແລ້ວ ການບົວລະບັດຮັກສາ ຈະຄ່ອຍຫຼຸດຜ່ອນລົງ ນອກຈາກ ການຖາງຫຍ້າ ທີ່ຂຶ້ນສູງ ແລະ ການປ້ອງກັນໄຟໄໝ້ ໃນຊ່ວງຕົ້ນລະດູແລ້ງ. ເຖິງຢ່າງໃດກໍ່ຕາມ, ມີຊາວກະສິກອນພຽງສ່ວນໜ້ອຍເທົ່ານັ້ນ ທີ່ທຳການລິຫງ່າທີ່ຢູ່ຕ່ຳ ຫຼື ກິ່ງກ້ານທີ່ຄົດງໍອອກ, ແຕ່ໃນຊ່ວງເວລາຫຼັງໆນີ້ ຊາວກະສິກອນ ໄດ້ມີຄວາມເອົາໃຈໃສ່ຫຼາຍຂຶ້ນ, ຊຶ່ງກວມເອົາຫຼາຍກວ່າ 50% ຂອງສວນປູກທັງໝົດ. ໂດຍທົ່ວໄປແລ້ວ, ໃນປັດຈຸບັນ ການຕັດສາງ ແມ່ນຈະເຮັດຊັກຊ້າຫຼາຍ, ຊຶ່ງສ່ວນໃຫຍ່ ຈະປະຕິບັດໃນເມື່ອອາຍຸ ຂອງຕົ້ນໄມ້ສັກໄດ້ປະມານ 10 ຫານ 15 ປີ ແລ້ວ. ການລິງ່າ ໃນຊ່ວງໄລຍະປີທີ່ 1 ເຖິງ ປີທີ່ 3 ນອກຈາກຈະເຮັດໃຫ້ຕົ້ນໄມ້ຂະຫຍາຍຕົວດີແລ້ວ ຍັງເປັນການປ້ອງກັນ ບໍ່ໃຫ້ລຳຕົ້ນເກີດເປັນປູດ, ຊຶ່ງຈະເປັນການເພີ້ມຄຸນຄ່າຂອງໄມ້ນຳອີກດ້ວຍ. ຕາມປົກກະຕິແລ້ວ ໄມ້ສັກຈະຂາຍເປັນຕົ້ນ ຫຼາຍກວ່າການຂາຍເປັນບໍລິມາດ.

ໄມ້ສັກ ແມ່ນເປັນພືດໄລຍະຍາວ ທີ່ຊາວກະສິກອນມີຄວາມສົນໃຈຫຼາຍ, ເພາະວ່າມັນງ່າຍໃນການປູກ ແລະ ຈະເລີນເຕີບໂຕໄວ, ພ້ອມທັງມີຄວາມທົນທານ ຕໍ່ໄຟໄໝໄດ້ດີ. ການຂະຫຍາຍສວນປູກໄມ້ສັກ ແບບລັກສະນະການປູກໄມ້ຊະນິດດຽວລ້ວນ ອາດມີບັນຫາໃນການເກີດພະຍາດ, ໂດຍສະເພາະ ແມ່ນຈຳພວກດ້ວງເຈາະລຳຕົ້ນ ແລະ ບົ້ງກິນໃບ. ນອກຈາກນີ້ ສວນປູກໄມ້ສັກ ແມ່ນ ມີການປ້ອງກັນ ດິນເຊາະເຈື່ອນໄດ້ໜ້ອຍ ແລະ ມັກຈະເຫັນມີການເຊາະເຈື່ອນຂອງດິນຫຼາຍ ໃນສວນປູກໄມ້ສັກທີ່ມີອາຍຸແກ່.

## ການສ້າງລາຍຮັບ

- ຮອບວຽນອາຍຸໄມ້ສັກ ທີ່ສາມາດຂາຍເປັນສິນຄ້າໄດ້ ແມ່ນປະມານ 50-80 ປີ ໂດຍຈະມີການຕັດສາງອອກໃນຊ່ວງໄລຍະອາຍຸປະມານ 15-25 ປີ. ຂະໜາດໄມ້ທ່ອນນ້ອຍສຸດ ທີ່ອະນຸມັດໃຫ້ເຂົ້າໂຮງເລື່ອຍ ຈະມີຂະໜາດໜ້າຕ້າງ ໃນລະດັບຄວາມສູງພຽງເອິກ ປະມານ 20 ຊມ. ທີ່ແຂວງຫຼວງພະບາງ ຂະໜາດນີ້ ຈະມີອາຍຸ ປະມານ 15 ປີ. ສະເລ່ຍ 1 ແມັດກ້ອນຈະລວມມີປະມານ 4 ຕົ້ນ ທີ່ມີໜ້າຕ້າງປະມານ 18 ຊມ.
- ໃນປະຈຸບັນ ຊາວກະສິກອນ ຈະມີລາຍຮັບປະມານ 25 ໂດລາສະຫະລັດ ຈາກການຂາຍໄມ້ ທີ່ມີໜ້າຕ້າງປະມານ 18-20 ຊມ. ຈຳນວນ 1 ຕົ້ນ, ຊຶ່ງຈະເທົ່າກັບ ປະມານ 100 ໂດລາສະຫະລັດ ຕໍ່ 1 ແມັດກ້ອນ. ພໍ່ຄ້າ ຈະຂາຍໄມ້ເຂົ້າໂຮງເລື່ອຍຂອງແຂວງ ໃນລາຄາປະມານ 130-140 ໂດລາ ຕໍ່ 1 ແມັດກ້ອນ. ລາຄາໄມ້ທ່ອນ ທີ່ຂາຍກັນຢູ່ວຽງຈັນແມ່ນ ປະມານ 230 ໂດລາ ສະຫະລັດ ຕໍ່ 1 ແມັດກ້ອນ. ແລະ ລາຄາຕະຫຼາດສົ່ງອອກ ແມ່ນປະມານ 350 ຫາ 600 ໂດລາສະຫະລັດ ຕໍ່ 1 ແມັດກ້ອນ. ລາຄາໄມ້ແປຮູບທີ່ຂາຍກັນ ຢູ່ ແຂວງ ຫຼວງພະບາງ ແມ່ນ 450 ໂດລາສະຫະລັດ ແລະ ຢູ່ວຽງຈັນ ແມ່ນປະມານ 650 ໂດລາສະຫະລັດ ຕໍ່ 1 ແມັດກ້ອນ.
- ບັນຫາຂອງຊາວກະສິກອນ ແມ່ນຕ້ອງໄດ້ລໍຖ້າຮອດ 20-30 ປີ ຈຶ່ງຈະໄດ້ລາຍຮັບຄືດັ່ງກ່າວ, ດັ່ງນັ້ນ ຈຶ່ງມີຫຼາຍຄົນຈຳເປັນຕ້ອງຂາຍສວນອາຍຸຍັງນ້ອຍ ໃຫ້ແກ່ພວກນາຍທຶນ. ໃນຂະນະດຽວກັນນັ້ນ, ໃນທົ່ວປະເທດ ແມ່ນຍັງມີພື້ນທີ່ດິນຈຳນວນຫຼວງຫຼາຍ, ແຕ່ພື້ນທີ່ດິນທີ່ມີຄວາມເໝາະສົມ ໃນການປູກໄມ້ສັກນັ້ນ, ໂດຍທົ່ວ ໄປແລ້ວແມ່ນຍັງຈຳກັດຢູ່. ຍ້ອນແນວນັ້ນ, ການຂະຫຍາຍສວນປູກໄມ້ສັກຢ່າງຫຼວງຫຼາຍ ໃນພາກເໜືອຂອງລາວອາດສິ່ງຜົນເຮັດໃຫ້ ຊາວກະສິກອນ ຕ້ອງສູນເສຍດິນທີ່ດີ ໃຫ້ແກ່ນາຍທຶນຜູ້ທີ່ຮັ່ງມີ.
- ນອກຈາກນີ້, ຊາວກະສິກອນເມື່ອໄດ້ຮັບເງິນ ຈາກການຂາຍໄມ້ແລ້ວແມ່ນຍາກໃນການຈະນຳໄປລົງທຶນເຮັດການຜະລິດຢ່າງອື່ນ. ໂດຍອີງຕາມສະຖານທີ່ (ໂດຍສະເພາະແມ່ນພື້ນທີ່ ທີ່ຢູ່ໃກ້ກັບຕົວເມືອງ) ແລະອາຍຸຂອງຕົ້ນໄມ້, ສວນໄມ້ສັກ ຈະຂາຍໄດ້ໃນລາຄາປະມານ 700 ໂດລາ ເຖິງ 2000 ໂດລາສະຫະລັດ ຕໍ່ 1 ເຮັກຕາ, ໃນຄະນະທີ່ລາຍຮັບສະເລ່ຍປະຈຳປີ ຂອງຄອບຄົວຊາວໄຮ່ ແມ່ນມີພຽງແຕ່ 500 ໂດລາສະຫະລັດເທົ່ານັ້ນ.



### ປັດໄຈທີ່ເຮັດໃຫ້ ມີການປູກໄມ້ສັກ ໃນ ເຂດຖາງປ່າເຮັດໄຮ່

1. ມີຄວາມເປັນໄປໄດ້ ໃນຄວາມໝັ້ນຄົງ ທາງດ້ານກຳມະສິດທີ່ດິນ ຂອງ ເອກະຊົນ
2. ມີການຊຸກຍູ້ ແລະ ສົ່ງເສີມ ຈາກພາກສ່ວນລັດ
3. ເປັນຮູບແບບ ໃນການຕັ້ງພື້ນຖານ ແບບຖາວອນ ໃຫ້ແກ່ບັນດາໝູ່ບ້ານຕ່າງໆ
4. ມີການຂະຫຍາຍລະບົບເສັ້ນທາງ, ເຮັດໃຫ້ເກີດມີສວນປູກໄມ້ ຢູ່ໃນເນື້ອທີ່ໃໝ່
5. ມີລະບົບການມອບດິນມອບປ່າ ຊຶ່ງເຮັດໃຫ້ປະຊາຊົນມີເນື້ອດິນເພີ່ມ ເພື່ອໃຊ້ສຳລັບການປູກພືດໄລຍະຍາວ
6. ການປູກເພື່ອຕອບສະໜອງໄມ້ຈາກປ່າທຳມະຊາດຫຼຸດລົງ ແລະ ຄວາມຕ້ອງການໄມ້ສັກ ທີ່ມີອາຍຸອ່ອນຂອງຕະຫຼາດເພີ່ມຂຶ້ນ
7. ການສົ່ງເສີມ ໂດຍພາກສ່ວນລົງທຶນເອກະຊົນ ໂດຍການສະໜອງທຶນ, ການຜະລິດເບ້ຍ ແລະ ແຈກຍາຍຂໍ້ມູນຂ່າວສານ

## ຄວາມເໝາະສົມ ທາງດ້ານສະພາບແວດລ້ອມ ແລະ ການກະຈາຍ ທາງດ້ານພູມີປະເທດ

ຂໍ້ຈຳກັດຕົ້ນຕໍ ທາງດ້ານສະພາບແວດລ້ອມແມ່ນລະດັບຄວາມສູງຈາກໜ້ານ້ຳທະເລ, ຊຶ່ງໄມ້ສັກບໍ່ສາມາດຈະເລີນເຕີບໂຕໄດ້ດີ ໃນພື້ນທີ່ ທີ່ມີລະດັບຄວາມສູງຫຼາຍກວ່າ 700-900 ແມັດ. ພ້ອມກັນນີ້ ຈະບໍ່ແມ່ນດິນໃນ ເຂດພື້ນທີ່ນ້ຳຖ້ວມ ແລະ ພື້ນທີ່ເຂດຕ່ຳ, ທີ່ເປັນຫີນແຮ່ ຫຼື ດິນເປັນກົດສູງ. ສະພາບມາດຖານພື້ນທີ່ ຄືດັ່ງກ່າວນັ້ນ, ເນື້ອທີ່ທີ່ບໍ່ສາມາດປູກໄມ້ສັກ ໃນທົ່ວເຂດພາກເໜືອ ມີພຽງແຕ່ 40 ຫາ 45 ເປີເຊັນ ເທົ່ານັ້ນ. ໃນນັ້ນ ໝາຍຄວາມວ່າການປູກໄມ້ສັກ ຈະບໍ່ຈຳເປັນຕ້ອງປູກແຕ່ຢູ່ໃນພື້ນທີ່ດິນ ທີ່ມີຄວາມອຸດົມສົມ ບູນເທົ່ານັ້ນ.

ພື້ນທີ່ສວນປູກໄມ້ສັກ ຫຼາຍກວ່າ 95% ແມ່ນຕັ້ງຢູ່ລຽບຕາມແຄມທາງ ແລະ ແຄມແມ່ນ້ຳ. ຍ້ອນວ່າ ໄມ້ສັກຄວນປູກໃນເຂດພື້ນທີ່ທີ່ມີເສັ້ນທາງ ແລະ ແມ່ນ້ຳເຂົ້າເຖິງ ເພື່ອຄວາມສະດວກໃນການຂົນສົ່ງ ແລະ ໄມ້ສັກມັກຈະປູກໃນເຂດພື້ນທີ່ທີ່ມີປະຊາຊົນອາໄສຢູ່ໜາແໜ້ນເຊັ່ນ: ໃນເຂດທີ່ມີການຖາງປ່າເຮັດໄຮ່ຫຼາຍ. ໃນເຂດພື້ນທີ່ດັ່ງກ່າວ, ຮອບວຽນປ່າເລົ່າ ແມ່ນມີພຽງ 2 ຫາ 6 ປີ ເທົ່ານັ້ນ ແລະ ຈະມີຊາວກະສິກອນຈຳນວນໜ້ອຍ ທີ່ສາມາດ ຜະລິດເຂົ້າກຸ້ມກິນ. ຍ້ອນບັນຫາ ການຂາດເຂົ້າກິນຄືແນວນັ້ນ ຈຶ່ງເຮັດໃຫ້ຊາວກະສິກອນຈຳຕ້ອງຂາຍສວນປູກຂອງເຂົາເຈົ້າ ເພື່ອໄດ້ເງິນໄປຊື້ເຂົ້າກິນ.

## ການປະສົມປະສານ ການກະສິກຳ ແລະ ການລ້ຽງສັດ.

ຕາມທຳມະດາແລ້ວ ໄມ້ສັກສາມາດປູກກັບພືດຊະນິດອື່ນໆໄດ້ ເພາະສະນັ້ນ ການປູກໄມ້ສັກ ມັກຈະປູກໃນເຂດພື້ນທີ່ດິນກະສິກຳ, ທັງທີ່ພື້ນທີ່ດັ່ງກ່າວຈະບໍ່ມີຄວາມເໝາະສົມ ໃນການເຮັດການກະສິກຳແບບຖາວອນໄດ້. ໄມ້ສັກສາມາດປູກປະສົມປະສານກັບ ບັນດາພືດຊະນິດຕ່າງໆ ໄດ້ເປັນຈຳນວນຫຼາຍປີ, ຊຶ່ງຈະຂຶ້ນກັບຜົນຮັບຈາກການປູກພືດກະສິກຳເຫຼົ່ານັ້ນເປັນຫຼັກ. ຖ້າພວກເຮົາປູກໄມ້ສັກ ໃນໄລຍະຫ່າງ 2 x 2 ແມັດ ຕາມປົກກະຕິແລ້ວ ຈະສາມາດປູກພືດປະສົມປະສານໄດ້ ພຽງແຕ່ 1 ປີ ເທົ່ານັ້ນ. ໄລຍະຫ່າງໃນການປູກທີ່ປະຕິບັດກັນ ສ່ວນຫຼາຍແມ່ນ 3 x 3 ແມັດ ຊຶ່ງສາມາດປູກພືດປະສົມປະສານໄດ້ 2 ຫາ 3 ປີ.

ຊະນິດຂອງພືດທີ່ຈະປູກນັ້ນຈະຂຶ້ນຢູ່ກັບວ່າ ມັນຈະສາມາດປູກປະສົມປະສານໄດ້ຈັກປີ. ເຂົ້າໄຮ່ ສາມາດປູກປະສົມປະສານໄດ້ ພຽງແຕ່ 1 ຫາ 2 ປີ ເທົ່ານັ້ນເພາະວ່າ ມັນຈະເກີດມີຫຍ້າຂຶ້ນຫຼາຍ ຊຶ່ງເຮັດໃຫ້ຜົນຜະລິດຕົກຕ່ຳ ຖ້າຫາກປູກຕິດຕໍ່ກັນ ໃນຫຼາຍໆປີ. ສ່ວນພືດຊະນິດອື່ນໆ ອາດສາມາດປູກປະສົມປະສານໄດ້ 2 ຫາ 3 ປີ ເຊັ່ນ: ໝາກນັດ, ສາລີ ແລະ ອ້ອຍ ເປັນຕົ້ນ.

ຄວາມສາມາດໃນການປ່ຽນແທນຈາກການຖາງປ່າເຮັດໄຮ່ ໂດຍຫັນມາປູກໄມ້ສັກ ແມ່ນມີຄວາມເປັນໄປໄດ້ທາງດ້ານວິຊາການ ແລະ ທາງດ້ານເສດຖະກິດ. ມູນຄ່າປະຈຳປີ ຕໍ່ແຮງງານ ທີ່ຈະໄດ້ຮັບຈາກການປູກໄມ້ສັກ ແມ່ນຈະໄກກັນຫຼາຍ ກັບການປູກເຂົ້າໄຮ່. ມັນມີຄວາມເປັນໄປໄດ້ ໃນການຫັນລະບົບ ໂດຍການລົງທຶນ ໃຫ້ຊາວກະສິກອນ ປູກໄມ້ສັກ ຈົນກວ່າເຂົາເຈົ້າຈະໄດ້ ຕັດໄມ້ສັກຂາຍ. ກຳມະສິດໃນການຄຸ້ມຄອງສວນປູກໄມ້ອາດຍັງເປັນຂອງນາຍ ທຶນເອກະຊົນຮ່ວມກັບຊາວກະສິກອນ ຫຼື ຖືກຳມະສິດຮ່ວມກັນ.

**ປ່າເລົ່າ: ບ່ອນໃດທີ່ເໝາະສົມໃນການປູກໄມ້ສັກ**

ການນຳໃຊ້ໄມ້ສັກໃນການປັບປຸງປ່າເລົ່າ ແມ່ນມີຂໍ້ຈຳກັດໂດຍການມີຮອບວຽນຜະລິດຍາວເຖິງ 15-20 ປີ, ຊຶ່ງຖ້າສົມທຽບໃສ່ກັບຄວາມອາດສາມາດຂອງຮອບວຽນປ່າເລົ່າທີ່ມີອາຍຸໂດຍທົ່ວໄປປະມານ2ຫາ6ປີ. ແຕ່ເຖິງແມ່ນວ່າໄລຍະຮອບວຽນຂອງປ່າເລົ່າຈະສາມາດຮັກສາເປັນເວລາຍາວນານໄດ້, ແຕ່ປ່າໄມ້ສັກອາດມີຂໍ້ຈຳກັດໂດຍການສົ່ງຜົນສະທ້ອນເຮັດໃຫ້ດິນເຊື່ອມຄຸນນະພາບລົງຖ້າຫາກວ່າຊາວກະສິກອນ ສາມາດຮັກສາສວນປູກໄມ້ຈົນກວ່າຈະສາມາດທຳການຂຸດຄົ້ນໄດ້, ເຂົາເຈົ້າຈະມີລາຍຮັບຫຼາຍ ແລະ ສູງກວ່າການປູກພືດຊະນິດອື່ນໆ ໄດ້ຫຼາຍເທົ່າ.



ບົດບາດຂອງການປູກໄມ້ສັກແມ່ນມີຄວາມເປັນໄປໄດ້ໃນການປ່ຽນແທນການຖາງປ່າເຮັດໄຮ່ເຊັ່ນຕົວຢ່າງ: ການປູກໄມ້ສັກ ໃນສ່ວນໜຶ່ງ ຂອງພື້ນທີ່ ແລະ ກໍ່ທຳການປູກພືດຢ່າງຕໍ່ ຕໍ່ເນື່ອງ ໃນພື້ນທີ່ອີກສ່ວນອື່ນໆ. ສວນປູກໄມ້ສັກຂະໜາດນ້ອຍແມ່ນຂ້ອນຂ້າງມີຄວາມເໝາະສົມ ສຳລັບຊາວກະສິກອນ ໂດຍທົ່ວໄປຖ້າຫາກມີການຈັດການທີ່ເໝາະສົມ ແລະສະຫງວນກຳມະສິດໄວ້ ຈົນກວ່າຈະສາມາດຂຸດຄົ້ນໄດ້.

## ບົດສະຫຼຸບ ແລະ ຄຳເຫັນແນະນຳ

ໂອກາດໃນການສ້າງລາຍຮັບ ຈາກການປູກໄມ້ສັກ ໃນເຂດພູດອຍ ທາງພາກເໜືອ ແມ່ນ ມີຄວາມເປັນໄປໄດ້ສູງ ຖ້າທຽບໃສ່ກັບການນຳໃຊ້ທີ່ດິນໂດຍທົ່ວໄປໃນປັດຈຸບັນ. ການຂະຫຍາຍສວນປູກໄມ້ສັກໃນອານາຄົດ ສາມາດເຮັດໄດ້ໃນເຂດພື້ນທີ່ປ່າຊຸດໂຊມ. ການປັບປຸງເສັ້ນທາງ ແມ່ນເປັນເງື່ອນໄຂອັນດີ ໃນການຂະຫຍາຍສວນປູກໄມ້ສັກ ໄປສູ່ຂົງເຂດພື້ນທີ່ໃໝ່.

## ການສົ່ງເສີມການປູກໄມ້ສັກ

ມັນມີຄວາມເປັນໄປໄດ້ ໃນການປັບປຸງທາງດ້ານ ການຈະເລີນເຕີບໂຕ ແລະ ຄຸນນະພາບ ຂອງໄມ້ສັກ ໂດຍວິທີການແບບງ່າຍໆ. ໃນນັ້ນລວມມີ: ການເສຍຫຍ້າໃຫ້ທັນເວລາ ແລະ ຖືກຕາມລະດູການ, ການຕັດສາງຂະຫຍາຍໄລຍະ, ການລິກິ່ງງ່າ ແລະ ການຄວບຄຸມໄຟປ່າ, ລວມທັງການປັບປຸງວິທີການຂະຫຍາຍພັນ ແລະ ການຄັດເລືອກ ແຫຼ່ງແກ່ນທີ່ດີ. ການເອົາໃຈໃສ່ ທາງວັນນະວັດວິທະຍາທີ່ດີ ຈະຊ່ວຍໃຫ້ຊາວກະສິກອນສາມາດຂາຍໄມ້ໄດ້ໄວຂຶ້ນ ແລະ ມີຄວາມຈູບຈ້າວຫ້າວຫັນ ໃນການຮັກສາສວນປູກໄມ້ສັກໄດ້ດີ. ການປັບປຸງການຄຸ້ມຄອງຈັດການສວນປູກ ລວມມີ:

- ສົ່ງເສີມໃນການສ້າງສວນປູກ ຂະໜາດນ້ອຍ (50-2000 ຕົ້ນ), ຊຶ່ງຊາວກະສິກອນ ຈະມີເງື່ອນໄຂສະດວກ ໃນການບົວລະບັດຮັກສາໃນຫຼາຍປີໄດ້.
- ສ້າງບົດແນະນຳ ໃນການຂະຫຍາຍພັນ ແລະ ການຄຸ້ມຄອງຈັດການສວນປູກ
- ຜະລິດເຄື່ອງມື ໃນການເຜີຍແຜ່ ຂໍ້ມູນຂ່າວສານທີ່ດີ ສຳລັບ ຊາວກະສິກອນ ແລະ ພະນັກງານສົ່ງເສີມ
- ສ້າງສວນສາທິດເຕັກນິກ ໃນການຈັດການ ແລະ ບົວລະບັດຮັກສາສວນປູກ.
- ສົ່ງເສີມ ການປູກໄມ້ສັກ ໃນເຂດພື້ນທີ່ ທີ່ຍັງບໍ່ມີ ເສັ້ນທາງ ແລະ ແມ່ນ້ຳເຂົ້າເຖິງ
- ຕອບສະໜອງໄມ້ ແລະ ແຫຼ່ງແກ່ນ ໃຫ້ແກ່ທ້ອງຖິ່ນໄດ້ນຳໃຊ້.

## Selected references

Fogdestam, N. & Galnander, H. 2004. Small-scale teak plantations on Luang Prabang Province, Lao PDR - Silviculture, ownership and markets. Swedish University of Agricultural Sciences.

Hedegart, T. 1995. Teak Improvement Programmes for Myanmar and Laos. FAO Regional Project "Strengthening Re-afforestation Programmes in Asia", Field Document No. 3.

**Authors:**
Peter Hansen (pkhansen@moa.gov.bt), Houmchitsavath Sodarak (frclpb@laotel.com) and Sianouvong Savathvong (sianouv@yahoo.com)

ຂຽນໂດຍ P.K.ແຮນເຊີນ 1 (ຫຸມຈິດສະຫວາດ email: frclpb@laotel.com),
ຫ.ໂສດາຣັກ2 ແລະ ສ.ສະຫວັດວົງ 3

Improving Livelihoods in the Uplands of the Lao PDR was produced in 2005 by NAFRI, NAFES and NUOL.